**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0573 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 19/03/2018

ຮຽນ: ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອໍານວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈໍາກັດ

ທີ່ນັບຖື

ເລື້ອງ: ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2018

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2018 ວັນທີ 16 ມີນາ 2018, ມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດ ປີ 2017 ລວມທັງບົດລາຍງານການເງິນຂອງບໍລິສັດ ປີ 2017 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ ແລະໃຫ້ນໍາເລື້ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2017 ເພື່ອພິຈາລະນາຮັບຮອງ.
2. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດໍາເນີນທຸລະກິດ ຂອງບໍລິສັດ 6 ເດືອນທ້າຍປີ 2017 (01/07/2017-31/12/2017) ພາຍຫຼັງການຫັກເປັນຄັງສໍາຮອງຕາມລະບຽບການ ແລະຄັງສໍາຮອງອື່ນໆ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກໍານົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 25 ເມສາ 2018 ໃນອັດຕາ 180 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດປະມານ 302,27 ຕື້ກີບ ແລະກໍານົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ 9 ພຶດສະພາ 2018 ແລະໃຫ້ນໍາເລື້ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2017 ເພື່ອພິຈາລະນາອະນຸມັດ.
3. ອະນຸມັດສະພາບໍລິຫານຊຸດເກົ່າໃຫ້ສືບຕໍ່ປະຕິບັດໜ້າທີ່ເປັນສະພາບໍລິຫານຂອງບໍລິສັດອີກວາລະໜຶ່ງ, ມີລາຍລະອຽດດັ່ງນີ້:

| | | |
|---|---|---|
| 1. | ທ່ານ ປອ. ຄໍາມະນີ ອິນທິລາດ | ປະທານສະພາບໍລິຫານ |
| 2. | ທ່ານ ບຸນອຸ້ມ ສີວັນເພັງ | ຮອງປະທານສະພາບໍລິຫານ |
| 3. | ທ່ານ ນາງ ລັດຕະນາ ປະທຸມວັນ | ກໍາມະການສະພາບໍລິຫານ |
| 4. | ທ່ານ ບຸນມາ ມະນີວົງ | ກໍາມະການສະພາບໍລິຫານ |
| 5. | ທ່ານ ນາງ ວານິດາ ສະຫວັດດີ | ກໍາມະການສະພາບໍລິຫານ |
| 6. | ທ່ານ ສີຈາດ ບຸດຊາກິດຕິລາດ | ກໍາມະການສະພາບໍລິຫານ |
| 7. | ທ່ານ ຮສ.ປອ ກອງສີ ແສງມະນີ | ກໍາມະການສະພາບໍລິຫານອິດສະຫຼະ |
| 8. | ທ່ານ ສຈ.ປອ. ຄໍາລືຊາ ນວນສະຫວັນ | ກໍາມະການສະພາບໍລິຫານອິດສະຫຼະ |
| 9. | ທ່ານ ຮສ. ຄໍາເຜີຍ ພົມມະຈັນ | ກໍາມະການສະພາບໍລິຫານອິດສະຫຼະ |

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແລະກຳນົດລາຍຊື່ຜູ້ອຳນວຍການທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1) ປະທານສະພາບໍລິຫານ ຫລື ຮອງປະທານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື

2) ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ໃຫ້ນຳເລື້ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເພື່ອພິຈາລະນາອະນຸມັດ.

4. ອະນຸມັດການແຕ່ງຕັ້ງບໍລິສັດ KPMG (Klynveld Peat Maiwick Goerdeler) ເປັນຜູ້ກວດສອບບັນຊີພາຍນອກ ປີ 2018 ແລະ ກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກປີ 2018 ເທົ່າກັບ 94.500 ໂດລາສະຫະລັດ, ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ເພື່ອພິຈາລະນາຮັບຮອງ.

5. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017, ມີລາຍລະອຽດດັ່ງນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈຳປີຜ່ານມາ ເພື່ອຊາບ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2017.

ວາລະທີ 3: ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2017 (01/01/2017-30/06/2017). ແລະການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2017.

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2017 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2017 ແລະ ແຜນການດຳເນີນທຸລະກິດ ຂອງບໍລິສັດປີ 2018.

ວາລະທີ 5: ພິຈາລະນາ ແລະ ອະນຸມັດຈ່າຍເງິນປັນຜົນ 6 ເດືອນທ້າຍປີ 2017 (01/07/2017-31/12/2017) ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ 6 ເດືອນທ້າຍປີ 2017.

ວາລະທີ 6: ພິຈາລະນາ ແລະອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2018 .

ວາລະທີ 7: ພິຈາລະນາ ແລະຮັບຮອງເອົາສະພາບໍລິຫານຊຸດໃໝ່ເພື່ອປ່ຽນແທນສະພາບໍລິຫານທີ່ຄົບອາຍຸການ.

ວາລະທີ 8: ພິຈາລະນາ ແລະອະນຸມັດ ແຜນຍຸດທະສາດຂອງບໍລິສັດ ປີ 2016-2025.

ວາລະທີ 9: ພິຈາລະນາ ແລະອະນຸມັດການສ້າງຕັ້ງບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະບຳລຸງຮັກສາຈຳກັດຜູ້ດຽວ

ດັ່ງນັ້ນ ຈິ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ລັດຕະນາ ປະທຸມວັນ